# ໄຊຊະນະແຫ່ງຊີວິດ

## ໂດຍທາງພຣະເຢຊູຄຣິດ



# ຂ່າວດີຂອງພຣະເຢຊູຄຣິດ

## ທີ່ຊ່ວຍກອບກູ້ມະນຸດໃຫ້ຫຼຸດພົ້ນຈາກການຄອບງໍາຂອງຜີມານ ຊາຕານແລະອໍານາດບາບຊົ່ວສູ່ຊີວິດໃໝ່ໃນພຣະເຢຊູຄຣິດ


**ຈັດພິມແລະເຮັດຮູບແບບໂດຍ**

ມູນລະນິທິປັນຮັກ

ເພື່ອໃຊ້ເຜີຍແຜ່ໃນຮູບແບບປຶ້ມແລະສື່ອອນໄລ

**ລິຂະສິດພາບໂດຍ**

ມູນລະນິທິຣາກຖານໝັ້ນຄົງ (New Tribes Mission)

ແລະ (OMF Publishers)

ພາສາແລະເນື້ອຫາພຣະຄໍາພີທີ່ໃຊ້ໃນເອກະສານສະບັບນີ້

ໃຊ້ພາສາງ່າຍ ເພື່ອຄົນທົ່ວໄປຈະເຂົ້າໃຈຫຼາຍຂຶ້ນ

(ເພື່ອຄວາມເຂົ້າໃຈທີ່ຊັດເຈນຍິ່ງຂຶ້ນ ທ່ານສາມາດອ່ານຂໍ້ພຣະຄໍາພີເຫຼົ່ານີ້

ປຽບທຽບກັບພຣະຄໍາພີພາສາລາວ)

ເອກະສານຊຸດນີ້ຈັດເຮັດເພື່ອແຈກຟີ

ທ່ານສາມາດນໍາໄປເຜີຍແຜ່ແກ່ໝູ່ແລະຄົນທົ່ວໄປ

( ບໍ່ສາມາດໃຫ້ຈັດເຮັດຊໍ້າໃນຮູບແບບຕ່າງໆ ເພື່ອການຂາຍ )



ຖ້າທ່ານຕ້ອງການຕິດຕໍ່ ຫຼືຂໍ້ລາຍລະອຽດເພີ່ມເຕີມ ສາມາດ ຕິດຕໍ່ໄດ້ທີ່

ທ້າວເດວິດ ດອສັນ ໂທລະສັບ +66 64 213 0523

ອີເມວ: info@thaichristianfoundation.org

ເວັບໄຊ: www.panrakfoundation.org







## ພຣະເຈົ້າຊົງສ້າງໂລກ

ໂລກແລະຈັກກະວານນີ້ເກີດຂຶ້ນຈາກການທີ່ພຣະເຈົ້າສ້າງແຜ່ນດິນແລະທ້ອງຟ້າ (ປະຖົມມະການ 1:1 ) ຄຣິສະຕຽນເຊື່ອວ່າພຣະເຈົ້າສ້າງໂລກແລະຈັກກະວານນີ້ຈາກສິ່ງທີ່ເບິ່ງບໍ່ເຫັນ ໃຫ້ເຫັນເປັນຮູບປະທຳໄດ້ດ້ວຍຄຳສັ່ງຂອງພຣະອົງ ( ເຮັບເລີ 11:3 )

## ທຸກຢ່າງໃນໂລກນີ້ດີຫຼາຍ

ພຣະເຈົ້າເຫັນວ່າທຸກສິ່ງທີ່ໄດ້ສ້າງຂຶ້ນມາເປັນສິ່ງທີ່ດີຫຼາຍ ( ປະຖົມມະການ 1:31 )

## ແຕ່ມະນຸດບໍ່ເຊື່ອຟັງພຣະເຈົ້າແລະເຮັດບາບ

ພຣະເຈົ້າໃຫ້ມະນຸດມີສິດທີ່ຈະເລືອກໂດຍບອກຄວາມຈິງແກ່ຜູ້ຊາຍຄົນທີ່ພຣະອົງໄດ້ສ້າງຂຶ້ນມາວ່າ ໝາກໄມ້ທຸກໆ ຕົ້ນໃນສວນນີ້ " ເຈົ້າຈະກິນໄດ້ໝົດທຸກຕົ້ນ ເວັ້ນໄວ້ແຕ່ຕົ້ນທີ່ຮູ້ຈັກຄວາມດີ ແລະຄວາມຊົ່ວ ເຈົ້າຢ່າກິນ ຖ້າເຈົ້າຫາກກິນໝາກໄມ້ໃນຕົ້ນນີ້ ເຈົ້າຈະຕ້ອງເຖິງແກ່ຄວາມຕາຍ..." ( ປະຖົມມະການ 2:16-17 )

ແຕ່ມະນຸດທີ່ພຣະເຈົ້າໄດ້ສ້າງມານັ້ນ ຢາກຈະມີອຳນາດເປັນເໝືອນກັນກັບພຣະເຈົ້າ ຕາມທີ່ງູຊຶ່ງໝາຍເຖິງມານໄດ້ຫຼອກລວງທັງສອງຄົນນີ້ ເຂົາເຈົ້າຈຶ່ງໄດ້ກິນຜົນຈາກຕົ້ນໄມ້ນັ້ນ ແລ້ວເຂົາເຈົ້າເກີດຄວາມຢ້ານທີ່ບໍ່ໄດ້ເຊື່ອຟັງພຣະເຈົ້າ ເຂົາເຈົ້າຈຶ່ງຫຼົບລີ້ຕົວຈາກພຣະອົງ ( ປະຖົມມະການ 3:1-8 )

ພຣະເຈົ້າຈຶ່ງຖາມວ່າ: "...ເຈົ້າກິນໝາກໄມ້ທີ່ເຮົາໄດ້ຫ້າມນັ້ນຫລື ? " ຊາຍຜູ້ນັ້ນຕອບວ່າ " ຜູ້ຍິງທີ່ພຣະອົງໄດ້ມອບໃຫ້ກັບຂ້ານ້ອຍເປັນຄົນເອົາໝາກໄມ້ຈາກຕົ້ນນັ້ນມາໃຫ້ຂ້ານ້ອຍກິນ " ແຕ່ຜູ້ຍິງອ້າງວ່າ " ງູ ( ໝາຍເຖິງມານ )ນັ້ນຍົວະໃຫ້ຂ້ານ້ອຍກິນ " ( ປະຖົມມະການ 3:11-13 )



# ມະນຸດຕ້ອງປະເຊີນກັບ
# ບັນຫາຫຼາຍເພາະຄວາມບາບ

## ມະນຸດຕາຍໃນຝ່າຍວິນຍານ

ເມື່ອບໍ່ມີກົດລະບຽບໃນການດຳເນີນຊີວິດ ເຮົາຈະບໍ່ມີຄວາມຜິດບາບ ແຕ່ເມື່ອມີກົດຂຶ້ນມາ ຄົນເຮົາບໍ່ຕ້ອງການເຮັດຕາມກົດ ( ໂຣມ 7:9 ) ເຮົາຈຶ່ງຕົກຢູ່ໃຕ້ອຳນາດຂອງບາບທີ່ນຳໄປສູ່ຄວາມຕາຍໃນຝ່າຍຈິດວິນຍານ ຈິດໃຈ ແລະການດຳເນີນຊີວິດ ມະນຸດຕົກຢູ່ໃນອຳນາດຂອງການບໍ່ເຊື່ອຟັງແລະມີຊີວິດທີ່ເຮັດບາບ ( ເອເຟໂຊ 2:1 )

## ມະນຸດຖືກແຍກອອກຈາກພຣະເຈົ້າ

ຍ້ອນວ່າມະນຸດຝ່າຝືນກົດລະບຽບການດຳເນີນຊີວິດຂອງພຣະເຈົ້າ ຄວາມສຳພັນລະຫວ່າງມະນຸດກັບພຣະເຈົ້າທີ່ສ້າງເຂົາເຈົ້າຖືກແຍກອອກຄື ມີເຫວເລິກທີ່ຂວາງກັ້ນ ( ລູກາ 16:26 ) ຍ້ອນວ່າມະນຸດມີການເຮັດບາບ ເຮັດໃຫ້ເຂົາເຈົ້າຕ້ອງຫຼົບລີ້ຈາກພຣະເຈົ້າ ຫ່າງໄກຈາກພຣະອົງ ຄວາມສຳພັນແຍກຂາດຈາກກັນ ( ເອຊາຢາ 59:2)



## ມະນຸດໄປເຖິງພຣະເຈົ້າໂດຍວິທີຂອງເຂົາເຈົ້າເອງບໍ່ສຳເລັດ

ມະນຸດພະຍາຍາມທຸກຫົນທາງທີ່ຈະໄປເຖິງສະຫວັນໃຫ້ໄດ້ມີຄວາມພະຍາຍາມເຮັດດີແຕ່ວ່າລົ້ມເຫຼວ ທຸ່ມເທການປະກອບພິທີກຳທາງສາສະໜາກໍ່ບໍ່ໄດ້ຜົນ ເພາະວ່າຍັງມີຊີວິດທີ່ເຮັດບາບ ປຽບຄືກັບເຂົາເຈົ້າພະຍາຍາມທີ່ຈະສ້າງຂົວເພື່ອຂ້າມເຫວທີ່ຂວາງກັ້ນລະຫວ່າງເຂົາເຈົ້າກັບພຣະເຈົ້າ ແຕ່ວ່າປະສົບຄວາມລົ້ມເຫຼວໃນທຸກວິທີເພາະວ່າສະຫວັນເປັນທີ່ບໍລິສຸດທີ່ຄົນຊົ່ວຜິດບາບເຂົ້າໄປໃນນັ້ນບໍ່ໄດ້ ໂດຍທຳມະຊາດແລະສ່ວນເລິກໃນຈິດໃຈຂອງມະນຸດຖືກຄອບຄອງດ້ວຍອຳນາດຂອງຄວາມຊົ່ວຮ້າຍ ສິ່ງດີຈະເກີດຂຶ້ນຈາກອຳນາດຊົ່ວຮ້າຍໄດ້ແນວໃດ ?

ພວກເຮົາທຸກຄົນກາຍເປັນສິ່ງທີ່ເປິເປື້ອນ ການພະຍາຍາມເຮັດດີຂອງເຮົາເປັນຄືຂີ້ເຫຍື້ອທີ່ເນົ່າເໝັນ ພວກເຮົາທຸກຄົນແຫ້ງຄືກັບໃບໄມ້ ຄວາມບາບຊົ່ວທັງຫຼາຍຂອງເຮົາເຮັດໃຫ້ຊີວິດຂອງເຮົາຄືກັບແກບທີ່ຖືກລົມພັດໃຫ້ປິວກະຈາຍໄປ (ເອຊາຢາ 64:6)

ກົດລະບຽບບໍ່ໄດ້ຊ່ວຍໃຫ້ມະນຸດເຮັດດີໄດ້ ແຕ່ກົງກັນຂ້າມວ່າມັນເປັນຕົວຊີ້ບອກຊັດເຈນວ່າມະນຸດເຮັດຕາມກົດລະບຽບໄດ້ ຫຼືບໍ່ໄດ້ ຊຶ່ງເຫັນໄດ້ຊັດວ່າມະນຸດລົ້ມເຫຼວໃນການກະທຳຕາມກົດລະບຽບທີ່ໄດ້ກຳນົດໄວ້ ເປັນການສະທ້ອນໃຫ້ເຫັນເຖິງອຳນາດຂອງຄວາມບາບທີ່ຄອບຄອງໃນຊີວິດຂອງເຮົາແຕ່ລະຄົນ (ໂຣມ 3:20; ເອເຟໂຊ 2:8-10)



# ຈິດໃຈຂອງມະນຸດເປັນມົນທິນ

ໃຈມະນຸດນັ້ນມີເລ່ຫຼ່ຽມກວ່າທຸກສິ່ງ ແລະມັນບໍ່ມີທາງປຽວຢາຮັກສາໄດ້ ຜູ້ໃດຈະເຂົ້າໃຈມັນໄດ້ລະ (ເຢເຣມີຢາ 17:9)

ຄືກັນກັບທີ່ພຣະຄຳພີຂຽນໄວ້ວ່າ
" ບໍ່ມີໃຜເຮັດຕາມທີ່ພຣະເຈົ້າຕ້ອງການເລີຍ ບໍ່ມີເລີຍແມ້ແຕ່ຄົນດຽວ " (ໂຣມ 3:10)

... ໃຈນີ້ແຫຼະມີຄວາມຄິດຊົ່ວບໍ່ດີ ການຜິດຊາຍຍິງ ການລັກຊັບ, ການຂ້າຄົນ,ການຫລິ້ນຊູ້ຈາກຜົວເມຍ, ການໂລບ, ການອະທຳ, ການລໍ້ລວງ, ລາຄະຕັນຫາ, ການອິດສາ, ການນິນທາ, ຄວາມຈອງຫອງ, ຄວາມໂງ່ທີ່ປ່ອຍຕົວໄປຕາມລຳພັງໃຈ "ສິ່ງຊົ່ວຮ້າຍທັງໝົດນີ້ເກີດມາຈາກທາງໃນແລະເຮັດໃຫ້ຄົນຊົ່ວມົວໝອງໃນສາຍຕາຂອງພຣະເຈົ້າ " (ມາຣະໂກ 7:21-23)

ກ່ອນທີ່ກັບໃຈເຊື່ອພຣະເຈົ້າ ມະນຸດເຄີຍດຳເນີນຊີວິດຕາມຕັນຫາຂອງຕົນເອງ ປ່ອຍຕົວປ່ອຍໃຈຫລົງໄຫລໄປຕາມນັ້ນ ຕາມສັນດານພວກເຮົາເປັນຄົນຄວນຖືກລົງໂທດເໝືອນດັ່ງຄົນອື່ນ (ເອເຟໂຊ 2:3)

ຈາກພາບນີ້ ຈິດໃຈມະນຸດເຕັມໄປດ້ວຍຄວາມບາບ ເຊັ່ນ: ຄວາມຢາກໄດ້, ຂີ້ລັກ, ເຈົ້າຊູ້ (ໂຕໝາ) ການຕົວະຫຼອກລວງ : ນິນທາວ່າຮ້າຍ, ສາບແຊ່ງດ່າ (ໂຕງູ) ກຽດຊັງ : ໂກດແຄ້ນທຳລາຍ (ໂຕເສືອ) ຄວາມຂີ້ຄ້ານ (ໂຕເຕົ່າ) ຄວາມໂລພາ (ໂຕໝູ) ຄວາມດື້ດ້ານ : ບໍ່ຟັງຄົນອື່ນ(ໂຕແບ້) ຄວາມທະນົງຕົວ : ດູຖູກຄົນອື່ນ (ໂຕນົກຍູງ) ດວງດາວທີ່ມືດມົວຄືຈິດສຳນຶກຂອງເຮົາທີ່ມືດບອດ ມານເປັນຜູ້ເຮັດໃຫ້ດວງຕາແຫ່ງຈິດໃຈຂອງເຮົາມືດມົວ (2 ໂກຣິນໂທ 4:4) ດັ່ງນັ້ນເຮົາຈຶ່ງບໍ່ເຫັນພຣະວິນຍານຂອງພຣະເຈົ້າ (ນົກກາງແກ) ຫຼືບໍ່ຟັງພຣະວັດຈະນະຂອງພຣະອົງ (ພຣະຄຳພີ) ຊຶ່ງສາມາດຈັດຄວາມບາບອອກຈາກຈິດໃຈຂອງມະນຸດເຮົາໄດ້






## ມະນຸດແກ້ໄຂສະພາບຈິດໃຈທີ່ຊົ່ວຮ້າຍຂອງຕົນເອງບໍ່ໄດ້

ພຣະເຢຊູຕໍ່ວ່າຜູ້ນຳສາສະໜານັ້ນວ່າ ໜ້າລະອາຍແທ້ພວກເຈົ້າທີ່ເປັນຄູສອນກົດປະຕິບັດແລະພວກຜູ້ນຳສາສະໜາ ເປັນຜູ້ປອມແປງເຮັດຕົວຄືເປັນຄົນດີ ແຕ່ພວກເຈົ້າເປັນຄືກັບອຸບໂມງຝັງສົບທີ່ທາສີຂາວຂ້າງນອກເບິ່ງງາມ ແຕ່ຂ້າງໃນເຕັມໄປດ້ວຍສົບ, ກະດູກຄົນຕາຍແລະສິ່ງເປື້ອນເປິ່ເໝັນ ພວກເຂົາເຈົ້າເຮັດຕົວໃຫ້ຄົນອື່ນເຫັນວ່າຕົນເປັນຄົນທີ່ເຮັດຕາມທີ່ພຣະເຈົ້າຕ້ອງການ ແຕ່ພາຍໃນເຕັມໄປດ້ວຍຄວາມໜ້າຊື່ໃຈຄົດ, ຄວາມຊົ່ວຮ້າຍ ແລະຫຼອກລວງ (ມັດທາຍ 23:27, 28)

ຈາກພາບນີ້ ນ້ຳທີ່ໄດ້ຈາກເຄື່ອງສູບນ້ຳເປັນນ້ຳເນົ່າເໝັນຍ້ອນວ່າແຫຼ່ງນ້ຳທີ່ຢູ່ໃຕ້ເປັນນ້ຳເນົ່າ ດັ່ງນັ້ນເຖິງຈະພະຍາຍາມທາສີຂາວໃສ່ເຄື່ອງສູບນ້ຳໃຫ້ເບິ່ງສະອາດສົມບູນ ຫຼືຍິນເທດສະໜາສັ່ງສອນໃຫ້ເຄື່ອງສູບນ້ຳນັ້ນຟັງ ຫຼືໃຊ້ໄມ້ແສ້ຕີລົງໂທດມັນກໍ່ບໍ່ອາດແກ້ໄຂໄດ້ດ້ວຍວິທີການໃດໜຶ່ງ ເພາະປັນຫາມັນຢູ່ພາຍໃນສ່ວນເລິກຄືແຫຼ່ງນ້ຳໃຕ້ດິນ ບໍ່ແມ່ນພາຍນອກທີ່ເປັນເຄື່ອງສູບນ້ຳ

ດັ່ງນັ້ນການແກ້ໄຂຕ້ອງແກ້ໄຂທີ່ສ່ວນເລິກຄືແຫຼ່ງນ້ຳທີ່ເນົ່າ ເຊັ່ນກັນວ່າການແກ້ໄຂຄວາມບາບຊົ່ວໃນຊີວິດມະນຸດຕ້ອງແກ້ໄຂທີ່ພາຍໃນຊີວິດຈິດໃຈຂອງມະນຸດ ແລ້ວຜູ້ໃດທີ່ຈະສາມາດແກ້ໄຂປ່ຽນຈິດໃຈຂອງມະນຸດໄດ້ ?



## ມະນຸດຕົກເປັນທາດຂອງມານ

ຕັ້ງແຕ່ມະນຸດເລີ່ມຕົ້ນທີ່ຈະບໍ່ເຊື່ອຟັງພຣະເຈົ້າແຕ່ເຊື່ອຟັງມານແລ້ວ ເຮົາຕົກຢູ່ໃຕ້ອຳນາດຂອງມານຮ້າຍທີ່ຄອບຄອງຄວາມຄິດແລະຈິດໃຈຂອງເຮົາ

ພວກເຮົາໃຊ້ຊີວິດຕາມທາງຊົ່ວຂອງໂລກນີ້ ຕາມອຳນາດຊົ່ວໃນຍ່ານຟ້າອາກາດ ຄືເປັນວິນຍານທີ່ຄອບຄອງຢູ່ພາຍໃນຕົວຂອງຄົນທີ່ບໍ່ເຊື່ອຟັງພຣະເຈົ້າ ( ເອເຟໂຊ 2:2)

ພວກເຮົາບໍ່ໄດ້ຕໍ່ສູ້ກັບມະນຸດທຳມະດາ ແຕ່ຕໍ່ສູ້ກັບຜູ້ປົກຄອງ, ຜູ້ມີອຳນາດ, ເຈົ້າໂລກທີ່ຢູ່ໃນໂມຫະຄວາມມືດແຫ່ງໂລກນີ້ ແລະຕໍ່ສູ້ກັບກຳລັງວິນຍານຝ່າຍຄວາມຊົ່ວຮ້າຍໃນອາກາດສະຖານ ( ເອເຟໂຊ 6:12 )

ເຖິງແມ່ນວ່າໂລກນີ້ຈະຢູ່ໃນມືຂອງມານຮ້າຍກໍ່ຕາມ ແຕ່ໃນສ່ວນເລິກຂອງຈິດໃຈເຮົາຮູ້ວ່າມີອຳນາດທີ່ດີເໜືອຄວາມຊົ່ວ ( 1ໂຢຮັນ 5:19 ) ແຕ່ເຮົາຊ່ວຍຕົວເອງໃຫ້ລອດອອກຈາກອຳນາດຂອງມານບໍ່ໄດ້

ແລະ " ຜູ້ທີ່ເຮັດບາບຕາມເຄີຍກໍ່ມາຈາກມານເພາະວ່າມານໄດ້ເຮັດບາບຕັ້ງແຕ່ຕົ້ນເດີມມາ ພຣະບຸດຂອງພຣະເຈົ້າໄດ້ມາໃນໂລກນີ້ກໍເພາະເຫດນີ້ແຫລະ ຄືເພື່ອທຳລາຍກິດຈະການຂອງມານເສຍ " ( 1 ໂຢຮັນ 3:8 )

ຊີວິດທີ່ຢູ່ພາຍໃຕ້ການຄວບຄຸມຂອງມານຊາຕານ
ເປັນຊີວິດທີ່ເຕັມໄປດ້ວຍປັນຫາ, ຄວາມທຸກຍາກລຳບາກ ແລະຄວາມຕາຍ



## ມະນຸດຕ້ອງຕາຍແລະຫຼັງຈາກນັ້ນຈະຖືກພິພາກສາ

ມະນຸດຕົກຢູ່ໃຕ້ອຳນາດຂອງຄວາມບາບຊົ່ວ ເຂົາເຈົ້າຈຶ່ງດຳເນີນຊີວິດໃນຄວາມຜິດບາບ ເມື່ອເຂົາເຈົ້າຕາຍໄປ ເຂົາເຈົ້າຕ້ອງພົບກັບການພິພາກສາ ( ເຮັບເຣີ 9:27 )

ມະນຸດທຸກຄົນຈະຕ້ອງຮັບການພິພາກສາຕາມການດຳເນີນຊີວິດຂອງຕົວເອງ

ຈາກຮູບພາບ ມີຊາຍຄົນໜຶ່ງຝັນວ່າໂຕເສືອ (ຜົນກຳຂອງລາວ ) ໄລ່ຕາມ ເຖິງວ່າລາວຈະພະຍາຍາມໜີເອົາຕົວລອດໂດຍໂດດຈັບເຄືອໄມ້ໄວ້ ແຕ່ວ່າໜີບໍ່ພົ້ນເພາະຍັງມີໂຕແຂ້ດັກຈັບຢູ່ທາງລຸ່ມ ( ຄວາມຕາຍແລະການພິພາກສາ ) ໂຕໜູສອງໂຕ ( ເປັນສັນຍາລັກທີ່ໝາຍເຖິງວັນເວລາ ) ທີ່ກຳລັງກັດກິນເຄືອ (ເສັ້ນທາງຊີວິດ ) ທີ່ເຫຼືອຢູ່ ແລະວັນໜຶ່ງເຄືອຈະຕ້ອງຂາດລົງ (ລາວຕ້ອງຕົກລົງດ້ານລຸ່ມ ລາວຕ້ອງຕາຍຍ້ອນໂຕແຂ້ ບໍ່ມີໃຜທີ່ຈະໜີພົ້ນການພິພາກສາໄດ້

ໃນອະດີດພຣະເຈົ້າບໍ່ຖືໂທດເພາະຄົນຍັງບໍ່ເຂົ້າໃຈ ແຕ່ເມື່ອພຣະເຈົ້າໃຫ້ພຣະເຢຊູຄຣິດເຂົ້າມາໃນໂລກນີ້ ເພື່ອປະກາດໃຫ້ມະນຸດໄດ້ເຂົ້າໃຈເຖິງຄວາມຈິງຢ່າງຖືກຕ້ອງ “ ຄືໃຫ້ທຸກຄົນຖິ້ມໃຈເກົ່າເອົາໃຈໃໝ່ ເພາະຫຼັງຈາກຄວາມຕາຍມະນຸດທຸກຄົນຈະຕ້ອງເຂົ້າສູ່ການພິພາກສາຢ່າງຍຸຕິທຳ ໂດຍຜູ້ທີ່ພຣະເຈົ້າແຕ່ງຕັ້ງໃຫ້ເປັນຄົນພິພາກສາໂລກ ” ( ກິດຈະການ 17:30, 31 ) ຄືພຣະເຢຊູຄຣິດທີ່ພຣະອົງມີສິດອຳນາດໃນການພິພາກສາມະນຸດເພາະອຳນາດແຫ່ງຄວາມບາບຊົ່ວບໍ່ສາມາດທີ່ຈະຄອບຄອງພຣະອົງໃຫ້ຢູ່ໃນຄວາມຕາຍໄດ້ ພຣະເຈົ້າໃຫ້ພຣະເຢຊູຄຣິດເປັນຂຶ້ນຈາກຄວາມຕາຍ



## ພຣະເຢຊູຄືຄຳຕອບຈາກພຣະເຈົ້າສຳລັບປັນຫາຂອງມະນຸດ

“ ເພາະວ່າພຣະເຈົ້າຊົງຮັກໂລກຫຼາຍທີ່ສຸດ ຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕະຫລອດໄປເປັນນິດ ” ( ໂຢຮັນ 3:16 )

“ ດ້ວຍວ່າ, ພຣະເຈົ້າໄດ້ໃຊ້ພຣະບຸດເຂົ້າມາໃນໂລກບໍ່ແມ່ນເພື່ອຕັດສິນລົງໂທດມະນຸດສະໂລກແຕ່ເພື່ອມະນຸດສະໂລກຈະໄດ້ພົ້ນດ້ວຍພຣະບຸດນັ້ນ ” ( ໂຢຮັນ 3:17 )

“ ພຣະເຈົ້າມີຄວາມກະລຸນາແລະພຣະອົງຍອມຮັບທຸກຄົນມາເປັນຄົນຂອງພຣະອົງໂດຍບໍ່ຄິດຄ່າ ແລະຍ້ອນສິ່ງທີ່ພຣະເຢຊູຄຣິດໄດ້ເຮັດ ພຣະເຈົ້າໄດ້ປົດປ່ອຍພວກເຂົາເຈົ້າໃຫ້ເປັນອິດສະລະຈາກການເປັນທາດຂອງບາບ ” ( ໂຣມ 3:24-25)



## ພຣະເຢຊູມີສິດອຳນາດໃນການຮັກສາຄົນເຈັບປ່ວຍ

ພຣະວິນຍານຂອງພຣະເຈົ້າສະຖິດໃນພຣະເຢຊູຄຣິດ ພຣະອົງຈຶ່ງມີສິດອຳນາດເໜືອທຳມະຊາດໃນໂລກນີ້

ພຣະເຈົ້າເຈີມພຣະເຢຊູຄຣິດດ້ວຍພຣະວິນຍານບໍລິສຸດ ແລະດ້ວຍຣິດເດດ ແລະພຣະເຢຊູໄດ້ເຮັດສິ່ງດີໆ ໄປທົ່ວ ແລະຮັກສາທຸກຄົນທີ່ຕົກຢູ່ພາຍໃຕ້ອຳນາດຂອງມານຮ້າຍໃຫ້ຫາຍພະຍາດ ພຣະອົງເຮັດແບບນີ້ໄດ້ຍ້ອນວ່າພຣະເຈົ້າຢູ່ນຳພຣະເຢຊູຄຣິດ ( ກິດຈະການ 10:38 )

ເມື່ອພຣະເຢຊູຄຣິດສະເດັດເຂົ້າມາໃນໂລກ

“ ພຣະເຢຊູເຈົ້າໄດ້ໄປທຸກເມືອງທຸກບ້ານ ແລະພຣະອົງໄດ້ສັ່ງສອນຢູ່ໃນທີ່ປະຊຸມຂອງຊາວຢິວ ແລະປະກາດຂ່າວດີກ່ຽວກັບການມາຕັ້ງຢູ່ຂອງອານາຈັກພຣະເຈົ້າຕະຫລອດທັງຮັກສາຄົນໃຫ້ຫາຍດີຈາກການເຈັບໄຂ້ໄດ້ປ່ວຍ ແລະພະຍາດນາໆຊະນິດ ” ( ມັດທາຍ 9:35 )

ສິ່ງທີ່ພຣະເຢຊູຄຣິດໄດ້ເຮັດໃນເວລານັ້ນ ຄືຮັກສາຄົນຕາບອດໃຫ້ເບິ່ງເຫັນ, ຄົນພິການຍ່າງໄດ້, ຄົນເປັນພະຍາດຜິວໜັງຮ້າຍແຮງກໍ່ຫາຍ, ຄົນຫູໜວກກໍ່ໄດ້ຍິນ, ຄົນຕາຍກໍ່ກັບເປັນຄືນມາໃໝ່ ແລະເຖິງແມ່ນວ່າຄົນຍາກຈົນກໍ່ມີໂອກາດໄດ້ຍິນໄດ້ຟັງເຖິງຂ່າວດີແຫ່ງການໂຜດມາຊ່ວຍມະນຸດໃຫ້ລອດຈາກອຳນາດຊົ່ວນີ້ຄືກັນ ( ມັດທາຍ 11:4-5)



# ພຣະເຢຊູຊົງມີສິດອຳນາດເໜືອຜີ ແລະຂັບໄລ່ວິນຍານຊົ່ວ

“ ແລະພໍຕາເວັນຕົກ ເມື່ອຄ່ຳແລ້ວເຂົາໄດ້ພາບັນດາຄົນເຈັບປ່ວຍແລະຄົນທີ່ມີຜີຮ້າຍ ສິງມາຫາພຣະອົງ ແລະຄົນທັງເມືອງກໍພາກັນມາອັ່ງອໍຢູ່ໜ້າປະຕູ. ພຣະອົງຈຶ່ງຊົງໂຜດ ຄົນທີ່ເຈັບປ່ວຍດ້ວຍພະຍາດຕ່າງໆ ໃຫ້ດີຫລາຍຄົນ ແລະຊົງຂັບໄລ່ຜີຮ້າຍຫລາຍໂຕ ອອກເສຍ ສ່ວນຜີຮ້າຍເຫລົ່ານັ້ນພຣະອົງບໍ່ຊົງອະນຸຍາດໃຫ້ປາກເພາະວ່າມັນຮູ້- ຈັກພຣະອົງ.” ( ມາຣະໂກ 1:32-34 )

“ ແລະຜີຖ່ອຍຮ້າຍທີ່ສິງຢູ່ໃນຄົນຫລາຍຄົນນັ້ນ ເມື່ອໄດ້ເຫັນພຣະອົງກໍໄດ້ໝູບລົງ ຂາບພຣະອົງແລ້ວຮ້ອງຂຶ້ນວ່າ, ‘ທ່ານເປັນພຣະບຸດຂອງພຣະເຈົ້າ.’ ” ( ມາຣະໂກ 3:11 )

ຫຼາຍກວ່ານັ້ນ ພຣະອົງໄດ້ໃຫ້ສາວົກມີສິດອຳນາດຄືກັນກັບພຣະອົງໃນການອອກໄປ ຮັບໃຊ້ປະຊາຊົນ ແລະປະກາດເລື່ອງແຜ່ນດິນຂອງພຣະເຈົ້າ ໃນນາມຂອງພຣະອົງ

ພວກເຈັດສິບສອງຄົນນັ້ນໄດ້ກັບຄືນມາທູນພຣະອົງວ່າ, “ນາຍເອີຍ, ເຖິງແມ່ນຜີຮ້າຍ ກໍຍອມຟັງຄວາມຂອງພວກຂ້ານ້ອຍ ເພາະເຫັນແກ່ນາມຊື່ຂອງທ່ານ.” ພຣະອົງຊົງ ກ່າວກັບເຂົາວ່າ, “ເຮົາໄດ້ເຫັນຊາຕານຕົກຈາກຟ້າເໝືອນດັ່ງຟ້າແມບ ” ( ລູກາ 10:17-18 )



## ຄຳສອນທີ່ສຳຄັນບາງສ່ວນທີ່ພຣະເຢຊູສັ່ງສອນປະຊາຊົນ

ພຣະເຢຊູບອກກັບຄົນຟັງວ່າ, "ເຮົາເປັນຄວາມສະຫວ່າງຂອງໂລກ ຜູ້ທີ່ຕາມເຮົາມາຈະບໍ່ທ່ຽວໄປໃນທີ່ມືດ ແຕ່ຈະມີຄວາມສະຫວ່າງແຫ່ງຊີວິດ." ( ໂຢຮັນ 8:12 )

"...ຝ່າຍເຮົາໄດ້ມາເພື່ອເຂົາຈະໄດ້ຊີວິດ ແລະຈະໄດ້ຢ່າງຄົບບໍລິບູນ " ( ໂຢຮັນ 10:10 )

ພຣະເຢຊູບອກອີກວ່າ " ທຸກຄົນທີ່ຮູ້ສຶກໜັກໜ່ວງແລະແບກພາລະໜັກ ຈົ່ງມາຫາເຮົາ ແລະເຮົາຈະໃຫ້ພວກທ່ານໄດ້ຮັບຄວາມເຊົາເມື່ອຍ. ຈົ່ງໃຫ້ເຮົາເປັນຜູ້ນຳຊີວິດຂອງທ່ານແລ້ວຮຽນຮູ້ຈາກເຮົາ ເພາະວ່າເຮົາເປັນຜູ້ໃຈອ່ອນສຸພາບແລະຖ່ອມລົງ ແລ້ວຈິດໃຈຂອງທ່ານຈະໄດ້ພົບຄວາມເຊົາເມື່ອຍ... " ( ມັດທາຍ 11:28-30 )

ເຈົ້າຢາກໃຫ້ຄົນອື່ນເຮັດຢ່າງໃດແກ່ເຈົ້າ ຈົ່ງເຮັດຢ່າງນັ້ນແກ່ເຂົາເໝືອນກັນ (ລູກາ 6:31 )

" ຖ້າເຈົ້າຍົກໂທດຄວາມຜິດຂອງຄົນອື່ນທີ່ໄດ້ເຮັດຕໍ່ເຈົ້າ ພຣະບິດາຂອງເຈົ້າຜູ້ຊົງສະຖິດໃນສະຫວັນກໍຈະຍົກຄວາມຜິດຂອງເຈົ້າຄືກັນ ແຕ່ຖ້າເຈົ້າບໍ່ຍົກໂທດໃຫ້ຄົນອື່ນ , ພຣະບິດາຂອງເຈົ້າກໍຈະບໍ່ຍົກຄວາມຜິດຂອງເຈົ້າໝືອນກັນ " ( ມັດທາຍ 6:14-15) ຖ້າເຮົາຍັງຖືໂທດ ໂທດນັ້ນຈະຢູ່ນຳໃຜ ?

**ຄຳສອນທັງໝົດຂອງພຣະເຢຊູຄຣິດ** ພຣະອົງໄດ້ສະຫຼຸບເປັນສອງຂໍ້ໃຫຍ່ໆຄື " ຮັກອົງພຣະເຈົ້າດ້ວຍສຸດໃຈ, ດ້ວຍສຸດຈິດ ແລະດ້ວຍສຸດຄວາມຄິດຂອງເຈົ້າ ແລະຮັກເພື່ອນບ້ານເໝືອນຮັກຕົນເອງ " ( ມັດທາຍ 22:37-39 )



# ສິ່ງທີ່ພຣະເຢຊູຄຣິດກະທຳໃນໂລກນີ້

## ພຣະອົງຮັບໃຊ້ຄົນອື່ນ ແລະປົດປ່ອຍໃຫ້ຄົນພົ້ນຈາກຄວາມບາບ

ພຣະເຢຊູຄຣິດບໍ່ໄດ້ມາໃນໂລກນີ້ເພື່ອຈະໃຫ້ຄົນອື່ນຮັບໃຊ້ຕົນເອງ ແຕ່ມາເພື່ອຈະຮັບໃຊ້ຄົນອື່ນ ແລະຍອມສະຫຼະຊີວິດຂອງພຣະອົງເພື່ອປົດປ່ອຍຫຼາຍໆຄົນເປັນອິດສະຫຼະຈາກອຳນາດແຫ່ງຄວາມຜິດບາບ ( ມາຣະໂກ 10:45 )

## ພຣະອົງຊົງແບກຮັບຄວາມບາບຂອງມະນຸດ

ພຣະເຢຊູຄຣິດໄດ້ແບກຮັບບາບຂອງເຮົາໄວ້ເປັນຂອງພຣະອົງເທິງໄມ້ກາງແຂນນັ້ນ ເພື່ອຢຸດຊີວິດທີ່ບາບຊົ່ວຂອງເຮົາ ແລະມີຊີວິດໃໝ່ຕາມທີ່ພຣະເຈົ້າຕ້ອງການ  ບາດແຜຊີວິດແຫ່ງຄວາມບາບຂອງພວກເຮົາໄດ້ຮັບການຮັກສາໃຫ້ເຊົາເພາະວ່າບາດແຜຄວາມເຈັບປວດຂອງພຣະຄຣິດເທິງໄມ້ກາງແຂນທີ່ຮັບແທນເຮົາ... ( 1ເປໂຕ 2:24 )

" ...ພຣະຄຣິດ ຜູ້ທີ່ບໍ່ມີຄວາມຜິດບາບນັ້ນ ໄດ້ເຂົ້າສ່ວນກັບຄວາມຜິດບາບຂອງເຮົາ ເພື່ອພວກເຮົາຈະໄດ້ເຂົ້າສ່ວນໃນຄວາມຊອບທຳຂອງພຣະເຈົ້າໂດຍທາງພຣະອົງ " ( 2ໂກຣິນໂທ 5:21 )

## ພຣະອົງຊົງມີໄຊຊະນະເໜືອອຳນາດຊົ່ວຮ້າຍ

ການຮັກສາພະຍາດ, ການຂັບໄລ່ຜີ, ການຂັບໄລ່ວິນຍານຊົ່ວ ແລະການເປັນຂຶ້ນມາຈາກຄວາມຕາຍຂອງພຣະຄຣິດເປັນການສະແດງເຖິງໄຊຊະນະຂອງພຣະເຈົ້າເໜືອອຳນາດແຫ່ງຄວາມບາບຊົ່ວ   ດັ່ງນັ້ນຖ້າໃຜເລືອກດຳເນີນຊີວິດພາຍໃຕ້ພຣະຄຸນຂອງພຣະຄຣິດ ຊີວິດຂອງຄົນນັ້ນກໍຈະບໍ່ຖືກຄອບຄອງຈາກອຳນາດຊົ່ວ ( ໂກໂລຊາຍ 2:15 )



## ພຣະເຢຊູມີໄຊຊະນະເໜືອຄວາມຕາຍ ໂດຍການເປັນຂຶ້ນມາໃໝ່

ເມື່ອສາວົກໄປບ່ອນຝັງສົບຂອງພຣະເຢຊູ ທູດສະຫວັນໄດ້ບອກພວກເຂົາເຈົ້າວ່າ ພຣະເຢຊູບໍ່ໄດ້ຢູ່ບ່ອນນີ້ແລ້ວ ພຣະອົງເປັນຂຶ້ນມາຈາກຄວາມຕາຍແລ້ວ ຕາມທີ່ພຣະອົງບອກພວກເຈົ້າແລ້ວລ່ວງໜ້າທີ່ເມືອງຄາລີເລວ່າພຣະອົງຈະຕ້ອງຖືກມອບໄວ້ໃນມືຂອງພວກຄົນບາບ ແລະຈະຖືກຄຶງໄວ້ທີ່ໄມ້ກາງແຂນ ແລ້ວພຣະອົງຈະເປັນຂຶ້ນມາໃໝ່ໃນມື້ທີ່ສາມ ( ລູກາ 24:6-7 )

ການເປັນຂຶ້ນມາຈາກຄວາມຕາຍບໍ່ແມ່ນເລື່ອງທີ່ເລີກລັບ, ທະຫານໂຣມທີ່ເຝົ້າອຸບໂມງຝັງສົບຂອງພຣະເຢຊູກໍ່ຢືນຢັນວ່າ ພຣະເຢຊູເປັນຂຶ້ນມາຈາກຄວາມຕາຍ ແລະນີ້ຄືໄຊຊະນະຂອງພຣະຄຣິດເໜືອຄວາມຕາຍ ຄວາມຕາຍບໍ່ສາມາດທີ່ຈະຄອບຄອງພຣະອົງໄວ້ແລະມີຄົນຈຳນວນຫຼາຍລວມທັງໂປໂລທີ່ເປັນພະຍານພົບເຫັນພຣະເຢຊູຕາມທີ່ບັນທຶກໃນພຣະຄຳພີ ( ກິດຈະການ 2:24,32; 1ໂກຣິນໂທ 15:3-8 )

ຜູ້ຂຽນພຣະຄຳພຣະນິມິດບອກວ່າ ພຣະຄຣິດກ່າວວ່າ " ເຮົາເປັນຜູ້ຕົ້ນແລະເປັນຜູ້ປາຍ ແລະເປັນຜູ້ມີຊີວິດຢູ່ ເຮົາໄດ້ຕາຍແລ້ວ ແຕ່ເບິ່ງແມ້! ເຮົາກໍມີຊີວິດຢູ່ຕະຫລອດໄປເປັນນິດ ແລະເຮົາຖືລູກກະແຈທີ່ໃຫ້ເຮົາມີອຳນາດທີ່ຈະເປີດຫຼືຈະປິດທີ່ຢູ່ຂອງຄົນຕາຍ ແລະສາມາດນຳພວກເຂົາເຈົ້າໃຫ້ມາມີຊີວິດອີກຄັ້ງໜຶ່ງ " ( ພຣະນິມິດ 1:17-18 )



## ພຣະເຢຊູຊົງຍິ່ງໃຫຍ່ເໜືອອຳນາດຊົ່ວຮ້າຍທັງສິ້ນ

ຍ້ອນວ່າພຣະເຢຊູຄຣິດຟື້ນຂຶ້ນຈາກຄວາມຕາຍ ພຣະອົງໄດ້ຂຶ້ນໄປສະຫວັນແລະນັ່ງຢູ່ເບື້ອງຂວາຂອງພຣະເຈົ້າ, ພຣະເຈົ້າເຮັດໃຫ້ພວກທູດສະຫວັນ, ພວກຜູ້ມີສິດອຳນາດ ມາຢູ່ພາຍໃຕ້ອຳນາດຂອງພຣະເຢຊູຄຣິດ ( 1 ເປໂຕ 3:22 )

ສິດອຳນາດຂອງພຣະເຢຊູຄຣິດໄດ້ມອບໃຫ້ສາວົກຜູ້ເຊື່ອໃນພຣະອົງໃຫ້ມີສິດອຳນາດເໜືອວິນຍານຊົ່ວຄືກັນ ເຊັ່ນ: ເມື່ອໂປໂລກຳລັງຈະໄປຮ່ວມກຸ່ມອະທິຖານ ຜູ້ຍິງທີ່ເປັນທາດຄົນໜຶ່ງທີ່ມີຜີໝໍດູສິງຮ້ອງຂຶ້ນວ່າໂປໂລເປັນຄົນໃດ... ຈົນໂປໂລອົດທົນບໍ່ໄຫວແລ້ວ ລາວຈຶ່ງຫັນໄປເວົ້າກັບວິນຍານຊົ່ວທີ່ຄອບຄອງຂອງນາງວ່າ "ໃນພຣະນາມແຫ່ງພຣະເຢຊູຄຣິດ ກູສັ່ງມຶງຈົ່ງອອກຈາກຍິງນັ້ນເສຍ" ມັນກໍອອກມາໃນເວລານັ້ນ ( ກິດຈະການ 16:18 )

## ພຣະເຢຊູຄຣິດຕ້ອງການໃຫ້ເຮົາມີຊີວິດໃໝ່

ພຣະອົງບໍ່ຕ້ອງການໃຫ້ເຮົາພຽງແຕ່ຈື່ຈຳຄຳສັ່ງສອນ ຫຼືຮຽນຮູ້ຈົດຈຳຊີວິດແລະເລື່ອງຂອງພຣະອົງເທົ່ານັ້ນ   ແຕ່ສິ່ງທີ່ພຣະອົງຕ້ອງການຄື *ຕ້ອງການໃຫ້ເຮົາແຕ່ລະຄົນມີຊີວິດໃໝ່ຕາມທີ່ພຣະອົງຕ້ອງການ*

ແຕ່ເນື່ອງຈາກຊີວິດຂອງເຮົາຖືກຄອບຄອງດ້ວຍຄວາມບາບຊົ່ວ ເຮົາບໍ່ມີກຳລັງຄວາມສາມາດທີ່ຈະປ່ຽນແປງຊີວິດຂອງເຮົາເອງໄດ້   ດັ່ງນັ້ນພຣະເຢຊູຄຣິດຈຶ່ງໃຫ້ພຣະວິນຍານບໍລິສຸດຂອງພຣະອົງເຂົ້າມາໃນຊີວິດຂອງເຮົາແຕ່ລະຄົນ ເພື່ອທີ່ຈະປ່ຽນແປງແລະເສີມສ້າງຊີວິດຂອງເຮົາໃໝ່ ໃຫ້ເປັນໄປຕາມຄຳສອນແລະແບບຢ່າງຊີວິດຂອງພຣະເຢຊູຄຣິດ



## ພຣະເຢຊູຊີ້ເປັນທາງໄປເຖິງພຣະເຈົ້າໃນສະຫວັນ

ພຣະເຢຊູບອກວ່າ, “ເຮົານີ້ແຫລະ, ເປັນທາງນັ້ນ, ເປັນຄວາມຈິງ ແລະ ເປັນຊີວິດ ບໍ່ມີຜູ້ໃດມາເຖິງພຣະບິດາໄດ້ນອກຈາກມາທາງເຮົາ. ” ( ໂຢຮັນ 14:6 )

ເປໂຕທີ່ເປັນສາວົກຂອງພຣະເຢຊູເວົ້າວ່າ, ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ ແລະເຂົ້າພິທີຈຸ່ມນ້ຳໃນນາມຂອງພຣະເຢຊູຄຣິດ ເພື່ອພຣະເຈົ້າຈະໄດ້ຍົກຄວາມຜິດບາບຂອງທ່ານ ແລ້ວທ່ານຈະໄດ້ຮັບພຣະວິນຍານບໍລິສຸດເປັນພະລັງຊີວິດທີ່ພຣະເຈົ້າໃຫ້ແກ່ທ່ານ... ເພາະນີ້ເປັນສິ່ງທີ່ພຣະເຈົ້າສັນຍາໄວ້ກັບພວກທ່ານ, ລູກຫຼານຂອງທ່ານ ແລະຄົນອື່ນໆຄືກັນ... (ກິດຈະການ 2:38-39)

“ ຜູ້ທີ່ວາງໃຈໃນພຣະບຸດ ( ພຣະເຢຊູຄຣິດ ) ກໍມີຊີວິດຢູ່ກັບພຣະເຈົ້າຕະຫລອດໄປເປັນນິດ ແຕ່ຜູ້ທີ່ບໍ່ເຊື່ອຟັງພຣະບຸດກໍຈະບໍ່ໄດ້ພົບກັບຊີວິດນັ້ນ ແລະຍັງຕ້ອງຕົກຢູ່ພາຍໃຕ້ການລົງໂທດຂອງພຣະເຈົ້າ.” ( ໂຢຮັນ 3:36 )

## ມອບຊີວິດຂອງທ່ານໃຫ້ພຣະເຈົ້າປ່ຽນແປງໃໝ່

“ ເຫດສັນນັ້ນພີ່ນ້ອງທັງຫລາຍເອີຍ, ໂດຍເຫັນແກ່ພຣະເມດຕາກະລຸນາຂອງພຣະເຈົ້າ ເຮົາຈຶ່ງຊັກຊວນພວກເຈົ້າໃຫ້ຖວາຍຕົວແກ່ພຣະອົງ ເພື່ອເປັນເຄື່ອງບູຊາທີ່ມີຊີວິດ, ເປັນອັນບໍລິສຸດ ແລະເປັນທີ່ຊອບພຣະໄທພຣະເຈົ້າ ຊຶ່ງເປັນການນະມັດສະການທີ່ສົມກັບຝ່າຍວິນຍານຂອງເຈົ້າທັງຫລາຍ. ຢ່າດຳເນີນຊີວິດເໝືອນຢ່າງຊາວໂລກນີ້ ແຕ່ຈົ່ງຮັບການຊົງປ່ຽນແປງຈິດໃຈ ແລ້ວອຸປະນິໄສຂອງພວກເຈົ້າຈຶ່ງຈະປ່ຽນໃໝ່ ເພື່ອເຈົ້າທັງຫລາຍຈະໄດ້ຮູ້ນ້ຳພຣະໄທຂອງພຣະເຈົ້າ ຈະໄດ້ຮູ້ວ່າອັນໃດດີ ອັນໃດເປັນທີ່ຊອບພຣະໄທພຣະເຈົ້າ ແລະອັນໃດດີທີ່ສຸດ.” ( ໂຣມ 12:1-2 )



# ພຣະເຈົ້າຊົງຍົກໂທດຄວາມຜິດບາບຂອງເຮົາ ແລະຊົງແກ້ໄຂຈິດໃຈ ແລະປ່ຽນແປງໃຫ້ເຮົາເປັນຄົນໃໝ່

" ທີ່ພວກເຮົາລອດນັ້ນເປັນຍ້ອນພຣະຄຸນດ້ວຍທາງຄວາມເຊື່ອ ສິ່ງເຫລົ່ານີ້ບໍ່ແມ່ນພວກເຮົາເຮັດເອົາເອງ ແຕ່ພຣະເຈົ້າຊົງມອບໃຫ້ເຮົາ." ( ເອເຟໂຊ 2:8 )

" ເຫດສັນນັ້ນຖ້າຜູ້ໃດຢູ່ໃນພຣະຄຣິດ ຜູ້ນັ້ນກໍເປັນຄົນທີ່ຖືກຊົງສ້າງຂຶ້ນໃໝ່ແລ້ວ ຖານະເກົ່າເຫລົ່ານັ້ນກໍລ່ວງໄປແລ້ວ ເບິ່ງແມ້, ກາຍເປັນສິ່ງໃໝ່ທັງນັ້ນ." ( 2 ໂກຣິນໂທ 5:17 )

" ແຕ່ທຸກຄົນທີ່ຕ້ອນຮັບພຣະອົງ ຄືຜູ້ທີ່ເຊື່ອໃນພຣະນາມຂອງພຣະອົງ ພຣະອົງກໍຊົງປະທານສິດໃຫ້ກາຍເປັນລູກຂອງພຣະເຈົ້າ. ຊຶ່ງບໍ່ໄດ້ເກີດຈາກເລືອດເນື້ອຫລືກາມ, ຫລືຄວາມປະສົງຂອງມະນຸດ ແຕ່ເກີດຈາກພຣະເຈົ້າ." ( ໂຢຮັນ 1:12-13 )

ການທີ່ພວກເຮົາໄດ້ເປັນຄົນໃໝ່ ບໍ່ສຳຄັນວ່າເຮົາເປັນຜູ້ໃດ, ຖານະໃດ ແຕ່ທີ່ສຳຄັນຫຼາຍກວ່າສິ່ງອື່ນໆຄື... ພຣະຄຣິດຢູ່ໃນຊີວິດພວກເຮົາທຸກຄົນ ດັ່ງນັ້ນໃຫ້ເຮົາທຸກຄົນມີຊີວິດທີ່ໄດ້ຮັບການສ້າງໃໝ່ ໃຫ້ມີຊີວິດເໝືອນຢ່າງພຣະຄຣິດ



## ພຣະເຢຊູຕຽມທີ່ຢູ່ສຳລັບເຮົາ

ໃນບ້ານຂອງພຣະບິດາຂອງເຮົາມີທີ່ຢູ່ຫລາຍບ່ອນ " ຖ້າບໍ່ມີເຮົາຄົງໄດ້ບອກພວກທ່ານແລ້ວ ເພາະເຮົາໄປຈັດແຈງບ່ອນໄວ້ສຳລັບທ່ານທັງຫລາຍ.  ເມື່ອເຮົາໄປຈັດແຈງບ່ອນໄວ້ສຳລັບພວກທ່ານແລ້ວ ເຮົາຈະກັບມາອີກເພື່ອຮັບທ່ານໄປຢູ່ກັບເຮົາ ເພື່ອວ່າເຮົາຢູ່ທີ່ໃດພວກທ່ານຈະຢູ່ທີ່ນັ້ນເໝືອນກັນ."  ( ໂຢຮັນ 14:2-3 )

## ຄົນທີ່ຍອມຮັບແລະຮັກພຣະອົງ ຈະໄດ້ຢູ່ກັບພຣະອົງຕະຫຼອດໄປເປັນນິດ

" ດ້ວຍວ່າຈະມີຄຳສັ່ງອັນດັງ, ຈະມີສຽງຂອງອັກຄະເທວະດາ ແລະສຽງແກຂອງພຣະເຈົ້າແລ້ວອົງພຣະຜູ້ເປັນເຈົ້າຈະລົງມາຈາກສະຫວັນ ພວກຄົນທີ່ເຊື່ອໃນພຣະຄຣິດທີ່ຕາຍໄປແລ້ວກໍຈະຟື້ນຄືນຊີວິດຂຶ້ນມາກ່ອນ.  ຫລັງຈາກນັ້ນເຮົາທັງຫລາຍຜູ້ມີຊີວິດຍັງເປັນຢູ່ກໍຈະຖືກຮັບຂຶ້ນໄປໃນເມກພ້ອມກັນກັບຄົນພວກນັ້ນ ແລະຈະພົບອົງພຣະຜູ້ເປັນເຈົ້າໃນຟ້າອາກາດ ຢ່າງນັ້ນແຫລະ, ພວກເຮົາກໍຈະຢູ່ນຳພຣະຜູ້ເປັນເຈົ້າເປັນນິດ."  ( 1 ເທຊະໂລນິກ 4:16-17 )

ຈາກພາບນີ້ ຜູ້ທີ່ຕ້ອນຮັບພຣະເຢຊູກໍ່ຮັບການອະໄພໂທດຈາກພຣະອົງໃຫ້ໄປຢູ່ກັບພຣະອົງ...ຄວາມຕາຍ, ການຄ່ຳຄວນ, ການຮ້ອງໄຫ້ ແລະການເຈັບປວດຈະບໍ່ມີອີກຕໍ່ໄປຍ້ອນວ່າຍຸກເກົ່ານັ້ນໄດ້ຜ່ານພົ້ນໄປແລ້ວ  ສ່ວນຜູ້ທີ່ບໍ່ຕ້ອນຮັບພຣະອົງຕ້ອງຕົກລົງໄປໃນທະເລໄຟເພາະວ່າຄວາມບາບທີ່ພວກເຂົາເຈົ້າໄດ້ເຮັດ ( ພຣະນິມິດ 20:11-15; 21:4 )

ພຣະເຢຊູເວົ້າກັບຜູ້ທີ່ເຊື່ອວ່າ " ເຮົາຢືນເຄາະຢູ່ທີ່ປະຕູ (ໃຈ) ຖ້າຜູ້ໃດໄດ້ຍິນສຽງຂອງເຮົາແລະໄຂປະຕູ (ໃຈ) ເຮົາຈະເຂົ້າໄປຫາຜູ້ນັ້ນ..." ( ພຣະນິມິດ 3:20 )

# ທ່ານຜູ້ອ່ານທີ່ເຄົາລົບຮັກ

ຖ້າທ່ານມີຈິດໃຈທີ່ຕ້ອງການຕ້ອນຮັບພຣະເຢຊູເຂົ້າມາໃນຊີວິດຂອງທ່ານ ທ່ານສາມາດເປີດຈິດໃຈຂອງທ່ານຕ້ອນຮັບເອົາພຣະອົງໄດ້ຕອນນີ້ ແລ້ວໃຫ້ທ່ານອະທິຖານຊຶ່ງເປັນການເວົ້າລົມກັນກັບພຣະເຈົ້າເປັນການສ່ວນຕົວ ຕາມຢ່າງຄຳອະທິຖານຢູ່ລຸ່ມນີ້:

ການອະທິຖານບໍ່ແມ່ນຄາຖາ ແຕ່ຄຳອະທິຖານຂອງທ່ານເປັນຄຳທີ່ທ່ານກັ່ນຕອງເວົ້າມາຈາກໃຈຈິງຂອງທ່ານ ເຊີນພຣະເຈົ້າເຂົ້າມາໃນຊີວິດດ້ວຍພາສາທີ່ງ່າຍທີ່ທ່ານຕ້ອງການບອກ,ຕ້ອງການເວົ້າລົມກັບພຣະເຈົ້າ

ເມື່ອພຣະເຢຊູເຂົ້າມາໃນຊີວິດຂອງທ່ານ ພຣະອົງຈະຊຳລະຄວາມຜິດບາບຕ່າງໆ ທີ່ທ່ານເຄີຍເຮັດ ພຣະອົງຈະປ່ຽນໃຫ້ທ່ານເປັນຄົນໃໝ່ ແລະທ່ານຈະໄດ້ເປັນລູກຂອງພຣະເຈົ້າ, ເປັນຊີວິດໃໝ່ຊຶ່ງຢູ່ກັບພຣະເຈົ້າຕະຫຼອດເປັນນິດທີ່ຄຣິດສຕຽນເອີ້ນວ່າ “ ຊີວິດນິລັນ ” ພຣະເຈົ້າຈະຊົງນຳການດຳເນີນຊີວິດປະຈຳວັນຂອງທ່ານ

ເມື່ອອະທິຖານບໍ່ແມ່ນວ່າໃຫ້ອະທິຖານແບບທີ່ຢູ່ລຸ່ມນີ້ເທົ່ານັ້ນແຕ່ວ່າທ່ານສາມາດອະທິຖານເວົ້າລົມກັນ, ປຶກສາໃນທຸກເລື່ອງ ແລະອະທິຖານໄດ້ທຸກເວລາ, ທຸກສະຖານທີ່

ແຕ່ໃນເທື່ອທຳອິດທີ່ເລີ່ມຕົ້ນເວົ້າລົມກັນກັບພຣະເຈົ້າ ຢູ່ລຸ່ມນີ້ເປັນແບບຢ່າງໃນການອະທິຖານທີ່ທ່ານສາມາດໃຊ້ ດັ່ງຕໍ່ໄປນີ້ :

*ພຣະເຈົ້າຜູ້ບໍລິສຸດ, ສັກສິດ ແລະສູງສຸດ ລູກຂໍເປີດໃຈຕ້ອນຮັບເອົາພຣະເຢຊູຄຣິດໃຫ້ເຂົ້າມາເປັນອົງພຣະຜູ້ເປັນເຈົ້າ ແລະເປັນພຣະເຈົ້າທີ່ຊ່ວຍລູກໃຫ້ລອດພົ້ນຈາກອຳນາດບາບຊົ່ວຮ້າຍທັງໝົດ ຂໍພຣະເຈົ້າໂຜດຍົກໂທດ ແລະຊຳລະຄວາມບາບຊົ່ວທີ່ລູກໄດ້ເຮັດມາໃນຊີວິດ ແລະຊ່ວຍລູກໃນການເລີ່ມຕົ້ນຊີວິດໃໝ່ຢ່າງທີ່ພຣະອົງຕ້ອງການ*

*ຂໍພຣະເຈົ້າໂຜດຂັບໄລ່ອຳນາດຊົ່ວຮ້າຍທັງປວງອອກໄປຈາກຊີວິດຂອງລູກ ມີພຽງພຣະອົງເທົ່ານັ້ນທີ່ເປັນພຣະເຈົ້າຜູ້ສູງສຸດໃນຊີວິດຂອງລູກ ໂຜດປ່ຽນແປງຊີວິດຂອງລູກໃຫ້ດີຂຶ້ນ ແລະໃຫ້ກຳລັງແກ່ລູກທີ່ຈະດຳເນີນຊີວິດປະຈຳວັນຕາມທີ່ພຣະອົງຕ້ອງການ ອາແມນ***

ນອກຈາກການເວົ້າລົມກັນປຶກສາກັບພຣະເຈົ້າດ້ວຍການອະທິຖານແລ້ວ ທ່ານຄວນມີໂອກາດໄດ້ອ່ານເລື່ອງລາວຂອງພຣະເຈົ້າທີ່ຢູ່ໃນພຣະຄຳພີ ແລະຄວນມີໂອກາດໄປຮ່ວມກັນກັບກຸ່ມຄຣິສະຕຽນ ທັງໃນບ້ານແລະໃນໂບດ ( ຄຣິສຕະຈັກ )

***ຄຳສັບ ອາແມນ ເປັນພາສາເດີມມີຄວາມໝາຍວ່າ ຂໍໃຫ້ເປັນເຊັ່ນນັ້ນ*




**ບາບ** ໂຣມ 3:23-25 ມາຣະໂກ 2:10

**ມານ** 1 ໂຍຮັນ 3:8 ໂຍຮັນ 1:12-13

**ຕາຍ** ໂຍຮັນ 3:16; 10:10

**ທຸກ** ໂຍຮັນ 14:16, 18, 26-27; 16:33
ໂຣມ 8:26

**ບໍ່ມີເປົ້າໝາຍ** ເອເຟໂຊ 1:4, 11; 2:10
1 ໂຄຣິນໂທ 15:57-58; ໂຣມ 8:28
ໂຍຮັນ 14:18-20; 15:15-16

## ໂດຍພຣະເຢຊູຄຣິດ
## ເຮົາໄດ້ຮັບຄວາມລອດພົ້ນຈາກສິ່ງເຫຼົ່ານີ້

1. ການລອດພົ້ນຈາກບາບ ຄືໄດ້ຮັບການຍົກໂທດເປັນຄົນຊອບທຳໂດຍຄວາມເຊື່ອ ( ໂຣມ 3:23-25; ມາຣະໂກ 2:10)
2. ການລອດພົ້ນຈາກອຳນາດແຫ່ງຄວາມມືດ ຄືພົ້ນຈາກອຳນາດຂອງຜີ, ມານ, ຊາຕານ ໄດ້ຮັບສິດທິເປັນບຸດຂອງພຣະເຈົ້າ ( 1 ໂຢຮັນ 3:8; ໂຢຮັນ 1:12-13 )
3. ການລອດພົ້ນຈາກຄວາມຕາຍ ມີໄຊຊະນະເໜືອຄວາມຕາຍ ຮັບຊີວິດທີ່ຄົບບໍລິບູນ ຄືຊີວິດນິລັນ ຫຼືຊີວິດອຳມະຕະ (ໂຢຮັນ 3:16; 10:10)
4. ການລອດພົ້ນຈາກຄວາມທຸກ ໃນໂລກນີ້ມີຄວາມທຸກຫຼາຍແຕ່ພຣະເຢຊູຄຣິດຊ່ວຍເຮົາມີສັນຕິສຸກໃນບັນດາຄວາມທຸກໂດຍການສົ່ງພຣະວິນຍານບໍລິສຸດຂອງພຣະອົງມາຢູ່ໃນຊີວິດຂອງເຮົາ ນຳເຮົາໄປສູ່ໄຊຊະນະ ( ໂຢຮັນ 14:16-18; 26-27; 16:33; ໂຣມ 8:18, 26; ຟີລິບປອຍ 4:6-7)
5. ການລອດພົ້ນຈາກຊີວິດທີ່ບໍ່ມີເປົ້າໝາຍ ໄປສູ່ການມີເປົ້າໝາຍໃນຊີວິດຕາມຄວາມຕ້ອງການຂອງພຣະເຈົ້າ ເຮັດໃຫ້ຊີວິດມີຄວາມຫວັງ, ລອດພົ້ນຈາກຊີວິດທີ່ເບື່ອ ເຊັ່ງ ໂດດດ່ຽວກາຍເປັນຊີວິດມີພຣະເຈົ້າຄຽງຂ້າງ, ມີທີ່ປຶກສາທຸກເວລາ, ມີຈຸດປະສົງຊັດເຈນໃນການດຳເນີນຊີວິດປະຈຳວັນ ( ເອເຟໂຊ 1:4, 11; 1 ໂກຣິນໂທ 15:57-58; ໂຣມ 8:28; ໂຢຮັນ 14:18-20; 15:15-16)

# ດາວໂຫຼດແລະແຊ

ไทย – Thai

ไทใหญ่ - Shan

กะเหรี่ยงสกอ - Karen Sgaw

กระเหรี่ยงโปว์ - Karen Poe

ว้า - Wa

ลาหู่ - Lahu

ພິມໂດຍ

ActsCo Printing

